**ລະບຽບການຂໍວີຊາຢູ່ຖາວອນສໍາລັບພົນລະເມືອງລາວ**

---

1. ໜັງສືຜ່ານແດນຕົ້ນສະບັບ ແລະ ສະບັບອັດສຳເນົາ: ຫນັງສືຜ່ານແດນຕ້ອງຍັງມີອາຍຸນຳໃຊ້ແຕ່ 6 ເດືອນຂື້ນໄປ, ໃຫ້ອັດສຳເນົາໜ້າໜັງສືຜ່ານແດນ, ວີຊາທັງໝົດ ແລະ ບັນດາກາຈ້ຳເຂົ້າອອກເມືອງ (ຖ້າມີ).
2. ຕື່ມຂໍ້ມູນເຂົ້າໃນໃບແຈ້ງອອນໄລຂໍວີຊາຢູ່ໜ້າເວັບຊາຍ: https://visawebapp.boca.gov.tw (General Visa), ຫຼັງຈາກນັ້ນໃຫ້ປີ້ນອອກ, ຕິດຮູບ (ຮູບ 2 ໃບຂະໜາດ 4x6 ພື້ນຮູບສີຂາວໄດ້ຖ່າຍພາຍໃນເວລາ 6 ເດືອນ), ຜູ້ກ່ຽວຕ້ອງເຊັນໃສ່ເບື້ອງຫຼັງຂອງໃບແຈ້ງ.
3. ໃບສົມລົດຕົ້ນສະບັບ ແລະ ສະບັບອັດສຳເນົາ (ໜັງສືນີ້ໄດ້ແປມາເປັນພາ ສາຈີນ ຫຼື ພາສາອັງກິດແລ້ວ, ໄດ້ໃຫ້ຖືກຕ້ອງຕາມກົດໝາຍຈາກ ກະຊວງການຕ່າງປະເທດລາວ, ສະ ຖານທູດລາວປະຈຳຫວຽດນາມ ແລະ ຫ້ອງການເສດຖະກິດ - ວັດທະນະທຳໃຕ້ຫວັນປະຈຳຫວຽດນາມ).
4. ໃບກວດສຸຂະພາບຢູ່ໂຮງໝໍຫວຽດນາມ ໂດຍຫ້ອງການເສດຖະກິດ ແລະ ວັດທະນະທຳໃຕ້ຫວັນປະຈຳຫວຽດ ນາມບົ່ງຕົວ (ແບບຟອມເປັນພາສາຈີນ) ຕົ້ນສະບັບ. ໃບສັກຢາວັກແຊງ Rubella ຖ້າບໍ່ຖືພາ.
5. ສະບັບຄັດກ່າຍສຳມະໂນຄົວໃຕ້ຫວັນຕົ້ນສະບັບທີ່ມີຄຸນຄ່າພາຍໃນ 3 ເດືອນ. (ໄດ້ສຳເລັດການລົງທະບຽນສົມ ລົດມາແລ້ວ ແລະ ໄດ້ຂຽນແຈ້ງຊື່ ແລະ ສັນຊາດຂອງຄົນລາວຢູ່ໃນສະບັບຄັດກ່າຍສຳມະໂນຄົວ).
6. ຊີວະປະຫວັດດ້ານຍຸຕິທຳທີ່ໄດ້ອອກໃຫ້ໃນເວລາກຳນົດໜຶ່ງປີຕົ້ນສະບັບ ແລະ ສະບັບອັດສຳເນົາ (ໜັງສືເຫຼົ່ານີ້ ໄດ້ແປມາເປັນພາສາຈີນ ຫຼື ພາສາອັງກິດແລ້ວ, ໄດ້ໃຫ້ຖືກຕ້ອງຕາມກົດໝາຍຈາກ ກະຊວງການຕ່າງປະເທດ ລາວ, ສະຖານທູດລາວປະຈຳຫວຽດນາມ ແລະ ຫ້ອງການເສດຖະກິດ - ວັດທະນະທຳໃຕ້ຫວັນປະຈຳຫວຽດ ນາມ (ຕົ້ນສະບັບຫຼັງຈາກສົມທຽບແລ້ວຈະສົ່ງຄືນ).

ວັນທີ update: 14/12/2017